# ເອເຊເທເຣ (ເອຊະເທ)

ໃຈຄວາມສຳຄັນ ພຣະເຈົ້າຮັກສາ

ຈຳນວນບົດ ໑໐ ບົດ

ເຣື່ອງເກີດຂຶ້ນໃນປີ ໔໘໔–໔໖໕ ກ່ອນ ຄ.ສ.

ເຣື່ອງເກີດຂຶ້ນທີ່ ເມືອງຊູເຊ ປະເທດເປເຣເຊ

## ໑. ຄຳນຳ

ໜັງສືນີ້ໄດ້ເລົ່າເຫດການຂອງຊາວຢູດາ ຊຶ່ງຍັງບໍ່ໄດ້ກັບຄືນກຸງເຢຣູຊາເລັມ ແລະຍັງຕົກເປັນທາດຂອງກະສັດເປເຣເຊ ເຣື່ອງນີ້ໄດ້ເກີດຂຶ້ນໃນສໄມທີ່ ທ່ານໂຊໂຣບາເບນ ກັບຄືນກຸງເຢຣູຊາເລັມ ກັບ ຊາວຢູດາ ໔໐.໐໐໐ ຄົນ ແຕ່ທ່ານເອເຊດຣາເຊກັບທ່ານເນເໝີຍັງໄດ້ອາໄສຢູ່ເມືອງບາບີໂລນຕໍ່ໄປ ເພາະພວກເຂົາຍັງບໍ່ໄດ້ນຳຊາວຢູດາທີ່ຍັງເຫລືອຢູ່ທີ່ນັ້ນກັບຄືນມາຍັງກຸງເຢຣູຊາເລັມ

## ໒. ວ່າດ້ວຍເນື້ອຄວາມ

ກ. ໃນໜັງສືນີ້ບໍ່ໄດ້ມີຄຳວ່າ ພຣະເຈົ້າ ເລີຍ ມີແຕ່ເຣື່ອງກ່ຽວກັບກິຈການຂອງພຣະອົງ

ຂ. ໜັງສືນີ້ ເລົ່າ ເຣື່ອງ ພຣະອົງຊົງຮັກສາ ແລະ ຄວາມ ຊົດຊ່ອຍຊາວຢູດາເພື່ອໃຫ້ພົ້ນຈາກເງື້ອມມືຂອງພວກສັດຕູ ແລະຍັງເລົ່າຕົ້ນເຣື່ອງຂອງເທສການ ປິຣິມ ຊຶ່ງເປັນເຣື່ອງທີ່ສແດງ

ໃຫ້ເຫັນພຣະເມດຕາຂອງພຣະເຈົ້າທີ່ບໍ່ຊົງປະຖິ້ມພວກຢູດາ

ຄ. ໝັງສືນີ້ເຣື່ອງຂອງສັງຄົມຄື:

໑. ເຣື່ອງນາງວາຊະຕີ ທີ່ໄດ້ຖືກກະສັດອາຊູເອຣີເຊ ປະຖິ້ມເພາະບໍ່ເຊື່ອຟັງຄວາມ

໒. ນາງເອເຊເທເຣ ເປັນຊາວຢູດາແຕ່ໄດ້ຖືກພຣະເຈົ້າຊົງໂຜດໃຫ້ໄດ້ເປັນເມັຍຂອງກະສັດ ເພາະພຣະອົງຊົງມີພຣະປະສົງຢາກຊ່ອຍພວກຂອງພຣະອົງດ້ວຍອີກທີ

໓. ທ່ານຫາມານ ຜູ້ເປັນສັດຕູຂອງຊາວຢູດາ ເພິ່ນໄດ້ສແດງຕົນເປັນຜູ້ທີ່ຕໍ່ສູ້ກັບຄົນຂອງພຣະເຈົ້າ ສນັ້ນເພິ່ນໄດ້ຖືກໂທດ

໔. ທ່ານມາເຣໂດເກ ໄດ້ຊັກຊວນນາງເອເຊເທເຣໃຫ້ເຝົ້າກະສັດ ເພື່ອ ທູນຂໍໃຫ້ ພວກ ຢູດາພົ້ນ ຈາກ ອຳນາດຂອງທ່ານຫາມານ

## ງ. ການປຽບທຽບ

ກ. ໃນການທີ່ນາງເອເຊເທເຣໄດ້ຍອມສລະຊີວິດຂອງຕົນ ເພື່ອຊ່ອຍພວກຂອງຕົນໃຫ້ພົ້ນນັ້ນ (໔:໑໖) ປຽບກັບພຣະເຢຊູຜູ້ໄດ້ຖວາຍຊີວິດຂອງຕົນເພື່ອແທນບາບຂອງພວກເຮົາ

ຂ. ການທີ່ນາງທູນຂໍຕໍ່ກະສັດກໍ່ປຽບກັບການທີ່ ພຣະເຢຊູຊົງທູນຂໍຕໍ່ພຣະບິດາຂອງພຣະອົງ (ເຮບເຣີ ໗:໒໕)

ຄ. ຄືທ່ານຫາມານຜູ້ເປັນສັດຕູຂອງຊາວຢູດາ ກໍປຽບກັບພະຍາມານທີ່ຕໍ່ສູ້ກັບຄົນຂອງພຣະອົງ (ຄຳປາກົດ ໑໒:໑໐)

໔. ກາບແບ່ງເປັນພາກ

ພາກທີ ໑ ມະເຫສີວາເຊຕີຖືກຂັບໄລ່ ບົດ ໑

" ໒ ນາງເອເຊເທເຣຖືກຄັດເລືອກໃຫ້ເປັນມະເຫສີ ບົດ ໒

" ໓ ທ່ານຫາມານຕັ້ງໃຈຈະທຳລາຍພວກຢູດາ ບົດ ໓–໖

" ໔ ເຣື່ອງທ່ານມາເຣໂດເກ ບົດ ໗–໑໐